**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງ ຄໍາມ່ວນ

ເລກທີ.09.../ສພຂ.ຄມ

ຄໍາມ່ວນ, ວັນທີ.[illegible].2025

# ມະຕິ

## ຮັບຮອງເອົາ ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຄໍາມ່ວນ ວ່າດ້ວຍ ການຄຸ້ມຄອງ ຄູສອນ ແລະ ນັກຮຽນ ພາຍໃນ ແຂວງຄໍາມ່ວນ.

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກໍາ(ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີ ຂອງເຈົ້າແຂວງ ຄໍາມ່ວນ ເລກທີ 02/ຈຂ, ລົງວັນທີ 3 ມັງກອນ 2025.

ຜ່ານການຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຄໍາມ່ວນ ຊຸດທີ II ກ່ຽວກັບເນື້ອໃນ ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຄໍາມ່ວນ ວ່າດ້ວຍການຄຸ້ມຄອງ ຄູສອນ ແລະ ນັກຮຽນ ພາຍໃນ ແຂວງຄໍາມ່ວນ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຄໍາມ່ວນ ຊຸດທີ II.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາ ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຄໍາມ່ວນ ວ່າດ້ວຍການຄຸ້ມຄອງ ຄູສອນ ແລະ ນັກຮຽນ ພາຍໃນ ແຂວງຄໍາມ່ວນ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

**ມາດຕາ 2** ການຈັດຕັ້ງປະຕິບັດ

1. ມອບໃຫ້ອົງການປົກຄອງແຂວງ ຊີ້ນໍາບັນດາພະແນກການຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈໍາ ສະພາປະຊາຊົນຂັ້ນແຂວງ, ບັນດາຄະນະກໍາມະການ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ດໍາເນີນການຕິດຕາມກວດກາການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ສະພາປະຊາຊົນແຂວງ ຄໍາມ່ວນ

ປະທານ

ບຸນມີ ພິມມະສອນ

- ບ່ອນສົ່ງ :

ທ່ານ ເຈົ້າແຂວງ ຄໍາມ່ວນ ຈໍານວນ 1 ສະບັບ

ເກັບຮັກສາໄວ້ ຈໍານວນ 1 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ຄໍາມ່ວນ

ເລກທີ 916 /ຈຂ
ຄໍາມ່ວນ, ວັນທີ 29 ເມີດສະພາ 2025

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ຄູສອນ ແລະ ນັກຮຽນ ພາຍໃນແຂວງຄໍາມ່ວນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບປັບປຸງ ສະບັບເລກທີ06/ສພຊ, ລົງວັນທີ16 ພະຈິກ2021.
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງຮັບຮອງເອົາຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງຄູສອນ ແລະ ນັກຮຽນ ແຂວງ ຄໍາມ່ວນ ສະບັບເລກທີ 09 /ສພຂ.ຄມ.ລົງວັນທີ 24 ເມສາ 2025.

## ເຈົ້າແຂວງ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ ຄູສອນ ແລະ ນັກຮຽນ ໃນສະຖານການສຶກສາຕ່າງໆພາຍໃນແຂວງ ເພື່ອເປັນການຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ ຂອງຄູສອນ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງນັກຮຽນ ເພື່ອພັດທະນາການຮຽນການສອນ, ສ້າງ ຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ.

**ມາດຕາ 2 ການຄຸ້ມຄອງ ຄູສອນ ແລະ ນັກຮຽນ**

ການຄຸ້ມຄອງ ຄູສອນ ແລະ ນັກຮຽນ ແມ່ນການປະຕິບັດ ນະໂຍບາຍການສຶກສາແຫ່ງຊາດ ຕາມການ ແບ່ງຂັ້ນຄຸ້ມຄອງ ໂດຍການມີສ່ວນຮ່ວມຂອງອົງການປົກຄອງ ແລະ ຊຸມຊົນໃນທ້ອງຖິ່ນ ເຮັດໃຫ້ຄູສອນໄດ້ ປະຕິບັດຖືກຕ້ອງຕາມນະໂຍບາຍຂອງວຽກງານການສຶກສາ ແລະ ລູກຫຼານຂອງປະຊາຊົນໄດ້ເຂົ້າຮຽນຕາມເກນ ອາຍຸ ເພື່ອພັດທະນາວຽກງານດັ່ງກ່າວໃຫ້ໄດ້ມາດຕະຖານ, ມີຄຸນນະພາບ, ມີຄວາມຍືນຍົງ, ເພື່ອພັດທະນາ ຊັບພະຍາກອນມະນຸດໃຫ້ກາຍເປັນພົນລະເມືອງດີ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີ ວິຊາຊີບ, ມີຄວາມຊໍານານງານ, ມີສຸຂະພາບພະລານາໄມ, ຮູ້ຮັກ ແລະ ສົ່ງເສີມສິລະປະວັດທະນະທໍາ ຮີດຄອງ ປະເພນີອັນດີງາມ ຂອງທ້ອງຖິ່ນ ແລະ ຂອງຊາດ.

**ມາດຕາ 3 ການອະທິບາຍຄໍາສັບ**

**ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງລຸ່ມນີ້:**

1. ຄູສອນ: ໝາຍເຖິງ ຜູ້ປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄວາມຮູ້, ສຶກສາອົບຮົມ, ຄົ້ນຄວ້າວິໄຈ, ຊຸກຍູ້, ສົ່ງເສີມ ແລະ ຊ່ວຍເຫຼືອຜູ້ຮຽນດ້ວຍຫຼາຍຮູບການ;

2. ນັກຮຽນ: ໝາຍເຖິງ ຜູ້ທີ່ກຳລັງສຶກສາຮຽນຮູ້ ຫຼື ຄົ້ນຄວ້າຢູ່ທຸກຊັ້ນ, ທຸກຂັ້ນ ໃນຊັ້ນການສຶກສາກ່ອນໄວຮຽນ, ສາມັນສຶກສາ, ວິຊາຊີບຊັ້ນຕົ້ນ ແລະ ວິຊາຊີບຊັ້ນກາງ;

3. ຄູສອນສາມັນສຶກສາ: ໝາຍເຖິງ ຄູທີ່ສອນນັກຮຽນຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາ;

4. ສາມລັກສະນະການສຶກສາລາວ ມີຄື: 1) ລັກສະນະຊາດ; 2) ລັກສະນະວິທະຍາສາດ ແລະ ທັນສະໄໝ; 3) ລັກສະນະມະຫາຊົນ;

5. ຫ້າຫຼັກມູນການສຶກສາລາວ ມີຄື: 1) ຄຸນສົມບັດສຶກສາ; 2) ປັນຍາສຶກສາ; 3) ແຮງງານສຶກສາ; 4) ພາລະສຶກສາ; 5) ສິລະປະສຶກສາ.

**ມາດຕາ 4 ນະໂຍບາຍຂອງລັດ**

ລັດຄຸ້ມຄອງ, ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນເຂົ້າໃນວຽກງານທີ່ກ່ຽວຂ້ອງກັບການຄຸ້ມຄອງ ຄູສອນ ແລະ ນັກຮຽນ ໃນຂະແໜງການສຶກສາ ແລະ ກິລາ ທົ່ວແຂວງຄຳມ່ວນ.

**ມາດຕາ 5 ຫຼັກການຄຸ້ມຄອງ**

1. ສອດຄ່ອງກັບ ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ;

2. ລວມສູນເປັນເອກະພາບພາຍໃນແຂວງ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ, ປຶກສາຫາລື ປະສານສົມທົບ ລະຫວ່າງ ແຂວງ, ເມືອງ ແລະ ໂຮງຮຽນ, ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ເປີດເຜີຍ, ພາວະວິໄສ ແລະ ສາມາດກວດສອບໄດ້;

3. ມີຄວາມສະເໝີພາບ ເພດ, ເຜົ່າ ໃນການບັນຈຸສັບຊ້ອນ, ການແຕ່ງຕັ້ງ ຫຼື ເລືອກຕັ້ງ, ການຄຸ້ມຄອງ ການນຳໃຊ້, ການປະເມີນຜົນ ແລະ ການປະຕິບັດໜ້າທີ່ວຽກງານ ຂອງຄູສອນ;

4. ສ້າງ, ພັດທະນາຄູສອນ ແລະ ນັກຮຽນ ໃຫ້ມີຄຸນນະພາບ, ຖືກຕ້ອງຕາມແນວທາງຂອງພັກ ແລະ ສອດຄ່ອງກັບແຜນພັດທະນາການສຶກສາ ໃນແຕ່ລະໄລຍະ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ໃນການຄຸ້ມຄອງ ຄູສອນ ແລະ ນັກຮຽນ ໃນຂະແໜງການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ພາຍໃນແຂວງຄຳມ່ວນ.

## ໝວດທີ II
## ການຄຸ້ມຄອງ ຄູສອນ ແລະ ນັກຮຽນແຕ່ລະຊັ້ນ

**ມາດຕາ 7 ການຄຸ້ມຄອງ ຄູສອນ**

**ຄູສອນ ຕ້ອງປະຕິບັດດັ່ງນີ້:**

1. ນຸ່ງຊຸດເຄື່ອງແບບ ທີ່ມີເຄື່ອງໝາຍ ຖານະນາມມະຍົດ ຂອງຂະແໜງການສຶກສາ ແລະ ກິລາ ວາງອອກຢ່າງເປັນລະບຽບຮຽບຮ້ອຍ ໃນຊົ່ວໂມງລັດຖະການ;

2. ຄົ້ນຄວ້າ, ສ້າງ, ປັບປຸງບົດສອນ ແລະ ຜະລິດສື່ການສອນຂອງຕົນ ໃຫ້ຖືກຕ້ອງຕາມຫຼັກສູດ ແລະ ສອດຄ່ອງກັບສະພາບການປ່ຽນແປງດ້ານຕ່າງໆ ໃນແຕ່ລະໄລຍະ;

3. ເຂົ້າຮ່ວມໃນການຝຶກອົບຮົມ, ຍົກລະດັບ ວິຊາສະເພາະຂອງຕົນ ໃນແຕ່ລະໄລຍະ;

4. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳ ຂອງສະຖານການສຶກສາ, ພໍ່ແມ່ຜູ້ປົກຄອງ ຊຸມຊົນ ແລະ ສັງຄົມ;

5. ສ້າງກິດຈະກຳການຮຽນຮູ້ຕ່າງໆ ເຊັ່ນ: ກິລາ, ສິລະປະ, ຖາມ-ຕອບວິທະຍາສາດ ແລະ ອື່ນໆ ທີ່ເປັນການສ້າງແຮງຈູງໃຈໃຫ້ນັກຮຽນຄຶດມັກໃນການຮຽນ ແລະ ບໍ່ຂາດໂຮງຮຽນ;

6. ຕິດຕາມ, ກວດກາ, ຕີລາຄາ, ວັດ ແລະ ປະເມີນຜົນ ກ່ຽວກັບການຮຽນ ການສອນ ຢ່າງເປັນປົກກະຕິ;

7. ເປັນແບບຢ່າງທີ່ດີ, ປົກປ້ອງ ແລະ ຮັກສາກຽດສັກສີ ຂອງຄວາມເປັນຄູ ພ້ອມທັງປະພຶດຕໍ່ນັກຮຽນຢ່າງເປັນທຳ ແລະ ມີຈັນຍາບັນ ຈັນຍາທຳຕໍ່ວິຊາຊີບ;

8. ເອົາໃຈໃສ່ຊ່ວຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ ແລະ ບຳລຸງນັກຮຽນອ່ອນທັງໃນ ແລະ ນອກຫ້ອງຮຽນ;

9. ມີການຮ່ວມໂມງສອນແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ ເພື່ອພັດທະນາການຮຽນ ການສອນໃຫ້ມີຄຸນນະພາບດີຂຶ້ນເທື່ອລະກ້າວ;

10. ສອນນັກຮຽນໃຫ້ຄົບ ແລະ ຖືກຕ້ອງຕາມໂຄງການຫຼັກສູດ, ຮັບປະກັນໃຫ້ໄດ້ຕາມ ສາມລັກສະນະ ຫ້າຫຼັກມູນຂອງການສຶກສາ ແລະ ສາມາດນຳເອົາຄວາມຮູ້ໄປນຳໃຊ້ໃນຊີວິດປະຈຳວັນ;

11. ພັດທະນາຄວາມຮູ້, ຄວາມສາມາດ, ທັກສະ ແລະ ທັດສະນະຄະຕິຂອງຕົນ ໃຫ້ມີຄວາມກ້າວໜ້າ ແລະ ທັນສະພາບການ ໂດຍສະເພາະດ້ານ ເຕັກໂນໂລຊີ ແລະ ພາສາຕ່າງປະເທດ;

12. ສ້າງຜົນງານ ແລະ ພັດທະນາການສອນ ຂອງຕົນເອງ ໃນໄລຍະທີ່ປະຕິບັດໜ້າທີ່ ເພື່ອໃຫ້ໄດ້ຮັບການຍ້ອງຍໍ, ເລື່ອນຊັ້ນ-ຂັ້ນ, ຮັບຕຳແໜ່ງວິຊາການຄູ ແລະ ນາມມະຍົດຄູ;

13. ເຄົາລົບ ປະຕິບັດກົດລະບຽບ ຂອງໂຮງຮຽນ, ມະຕິ, ຄຳສັ່ງຂອງຂັ້ນເທິງ ແລະ ກົດໝາຍຢ່າງເຂັ້ມງວດ;

14. ປົກປັກຮັກສາຊັບສົມບັດ, ສິ່ງຂອງສ່ວນລວມ, ສິ່ງແວດລ້ອມ ແລະ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ໃນໂຮງຮຽນ ແລະ ສັງຄົມ;

15. ມີປຶ້ມບັນທຶກ ເພື່ອຕິດຕາມການຂາດຮຽນ ແລະ ການເຄື່ອນໄຫວກິດຈະກຳຕ່າງໆ ຂອງນັກຮຽນ;

16. ປະຕິບັດໜ້າທີ່ຕາມການສັບຊ້ອນ, ຍົກຍ້າຍຂອງການຈັດຕັ້ງ ໄປປະຕິບັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ;

17. ປະຕິບັດດ້ານອື່ນໆ ຕາມການມອບໝາຍຂອງ ການຈັດຕັ້ງ ແລະ ຂັ້ນເທິງ.

**ມາດຕາ 8 ການຄຸ້ມຄອງ ນັກຮຽນ**

**ນັກຮຽນ ຕ້ອງໄດ້ຮັບ ແລະ ປະຕິບັດດັ່ງນີ້:**

1. ໄດ້ຮັບສິດສະເໝີພາບ ໃນການເບິ່ງແຍງ, ດູແລ, ສົ່ງເສີມການຮຽນຮູ້ຈາກຄູ, ພໍ່ແມ່/ຜູ້ປົກຄອງ ແລະ ສັງຄົມ;

2. ໄດ້ຮັບການສົ່ງເສີມສຸຂະພາບ ແລະ ສຸຂະນາໄມ ໃນສະຖານການສຶກສາ;

3. ໄດ້ຮັບເອກະສານຕ່າງໆ ທີ່ກ່ຽວຂ້ອງພາຍຫຼັງທີ່ຮຽນຈົບ ແຕ່ລະຊັ້ນຮຽນ;

4. ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມ, ສ້າງຕົນເອງໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຮຽນໃຫ້ຈົບຕາມຫຼັກສູດ;

5. ປະຕິບັດກິດຈະກຳໃນຫ້ອງຮຽນ ແລະ ໂຮງຮຽນຢ່າງຕັ້ງໜ້າ, ປະກອບສ່ວນຮັບໃຊ້ວຽກງານຕ່າງໆ ຂອງໂຮງຮຽນ ແລະ ສັງຄົມ;

6. ປະຕິບັດຕາມຂໍ້ກຳນົດ, ກົດລະບຽບຂອງໂຮງຮຽນ ວາງອອກຢ່າງເຂັ້ມງວດ;

7. ປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ-ຂອງຊາດ, ພາສາຊາດ, ນັບຖືຜູ້ນຳ, ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ຜູ້ຊົງຄຸນວຸດທິ, ຄະນະອຳນວຍການ, ຄູ, ພະນັກງານ, ທະຫານ, ຕຳຫຼວດ, ພໍ່ແມ່ປະຊາຊົນ ແລະ ນັກຮຽນດ້ວຍກັນ;

8. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳນອກຫຼັກສູດ ແລະ ການເຄື່ອນໄຫວຮັບໃຊ້ສັງຄົມ;

9. ປົກປັກຮັກສາວັດຖຸສິ່ງຂອງສ່ວນລວມ ແລະ ຮັກສາສະພາບແວດລ້ອມ;

10. ສ້າງຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການຮຽນ ໂດຍບໍ່ຈຳແນກເພດ, ເຜົ່າ, ອາຍຸ (ໄວ), ຜູ້ດ້ອຍໂອກາດ ແລະ ຜູ້ມີຄວາມຕ້ອງການພິເສດ(ຜູ້ພິການ);

11. ປະຕິບັດດ້ານອື່ນໆຕາມການມອບໝາຍຂອງຄູ ແລະການຈັດຕັ້ງ.

## ໝວດທີ III
## ຂໍ້ຫ້າມ
## ຂໍ້ຫ້າມສໍາລັບ ຄູສອນ ແລະ ນັກຮຽນ

**ມາດຕາ 9 ຂໍ້ຫ້າມສໍາລັບ ຄູສອນ**

**ຄູສອນໃນສະຖານການສຶກສາຕ່າງໆ ຫ້າມມີພຶດຕິກໍາດັ່ງນີ້:**

1. ໂຄສະນາເຜີຍແຜ່ສິ່ງລາມົກອານາຈານ, ສິ່ງເສີມ ຫຼື ດື່ມສິ່ງມຶນເມົາແລະ ເອົາຂໍ້ມູນລົງສື່ທຸກປະເພດທີ່ຂັດກັບລະບຽບກົດໝາຍ ແລະ ແຕະຕ້ອງເຖິງກຽດສັກສີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຮີດຄອງປະເພນີອັນດີງາມຂອງຊາດ ຂອງເຜົ່າ;

2. ສວຍໃຊ້ອໍານາດໜ້າທີ່, ຕໍາແໜ່ງ, ຊອກຫາຜົນປະໂຫຍດສ່ວນຕົວ ໂດຍທາງກົງ ຫຼື ທາງອ້ອມ ເຊິ່ງກໍ່ໃຫ້ເກີດຜົນກະທົບແກ່ນັກຮຽນ, ຜູ້ປົກຄອງ, ນິຕິບຸກຄົນ ແລະ ການຈັດຕັ້ງ;

3. ລະເມີດຕໍ່ຫຼັກສູດການສອນ, ການຝຶກອົບຮົມວິຊາຊີບ, ການທົດສອບ ແລະ ການສອບເສັງ ທີ່ໄດ້ວາງອອກ;

4. ໃຊ້ຄວາມຮຸນແຮງ, ນາບຂູ່, ໃຊ້ວາຈາທີ່ບໍ່ສຸພາບ,ສ້າງກຸ່ມກ້ອນ, ພັກພວກ, ປັ່ນປ່ວນ ແລະ ແບ່ງແຍກຄວາມສາມັກຄີພາຍໃນ-ພາຍນອກ ລວມທັງການຈໍາແນກ ສັນຊາດ, ເຊື້ອຊາດ, ສາສະໜາ, ເຜົ່າ, ເພດ, ສະຖານະພາບທາງຮ່າງກາຍ, ຖານະທາງດ້ານເສດຖະກິດ-ສັງຄົມຕໍ່ນັກຮຽນ ເຊິ່ງກໍ່ໃຫ້ເກີດມີຄວາມເສຍຫາຍຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ

5. ຂາດຄວາມຮັບຜິດຊອບ, ເມີນເສີຍ, ປະລະໜ້າທີ່, ບໍ່ປະຈໍາການເປັນປົກກະຕິ ຫຼື ຢຸດເຊົາການປະຕິບັດໜ້າທີ່ວຽກງານ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;

6. ຊື້-ຂາຍ, ຄອບຄອງ ແລະ ມີສ່ວນຮ່ວມພົວພັນເສບ ສິ່ງເສບຕິດ (ໃບກະທ່ອມ, ຢາສູບໄຟຟ້າ, ຄໍລາເຈນ, ຢາບ້າ, ຢາອີ, ຜົງຂາວ ແລະ ອື່ນໆ), ຄອບຄອງອາວຸດ, ວັດຖຸລະເບີດ, ສານເຄມີທີ່ຕ້ອງຫ້າມ, ໄພສັງຄົມ ແລະ ຫຼິ້ນການພະນັນທີ່ຕ້ອງຫ້າມ ທີ່ຂັດກັບລະບຽບ ກົດໝາຍ;

7. ຫຼິ້ນໂທລະສັບ, ສູບຢາໃນເວລາຂຶ້ນຫ້ອງສອນ ແລະ ນຸ່ງເຄື່ອງແບບຄູ ເຂົ້າໃນຮ້ານບັນເທີງ ຫຼື ສະຖານທີ່ອື່ນທີ່ບໍ່ເໝາະສົມ;

8. ພົວພັນກັບນັກຮຽນ ແບບຊູ້ສາວ ທີ່ຜິດຕໍ່ລະບຽບຂອງສະຖານການສຶກສາ ແລະ ຮີດຄອງປະເພນີ;

9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບ ແລະ ກົດໝາຍ;

**ມາດຕາ 10 ຂໍ້ຫ້າມສໍາລັບນັກຮຽນ**

**ນັກຮຽນໃນສະຖານການສຶກສາຕ່າງໆຫ້າມມີພຶດຕິກໍາດັ່ງນີ້:**

1. ມີພຶດຕິກໍາທີ່ເປັນການລະເມີດ ກົດລະບຽບຂອງໂຮງຮຽນ ໂດຍທາງກົງ ແລະ ທາງອ້ອມຕໍ່ຄູ ແລະ ບຸກຄະລາກອນການສຶກສາ;

2. ໃຊ້ຄວາມຮຸນແຮງທີ່ກະທົບ ຕໍ່ຮ່າງກາຍ ແລະ ຈິດໃຈ ຂອງເພື່ອນນັກຮຽນ, ຄູ ແລະ ຄົນໃນສັງຄົມ;

3. ຊື້-ຂາຍ, ຄອບຄອງ ແລະ ມີສ່ວນຮ່ວມພົວພັນເສບ ສິ່ງເສບຕິດ (ໃບກະທ່ອມ, ຢາສູບໄຟຟ້າ, ຄໍລາເຈນ, ຢາບ້າ, ຢາອີ, ຜົງຂາວ ແລະ ອື່ນໆ), ຄອບຄອງອາວຸດ, ວັດຖຸລະເບີດ, ສານເຄມີທີ່ຕ້ອງຫ້າມ, ໄພສັງຄົມ ແລະ ຫຼິ້ນການພະນັນທີ່ຕ້ອງຫ້າມ ຢູ່ສະຖານການສຶກສາ ແລະ ສະຖານທີ່ອື່ນ ທີ່ຂັດກັບລະບຽບ ກົດໝາຍ;

4. ເຂົ້າຮ້ານສະນຸກເກີ, ຮ້ານເກມ, ສະຖານບັນເທີງ, ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ;

5. ສ້າງກຸ່ມກ້ອນ, ພັກພວກ ເພື່ອກໍ່ຄວາມບໍ່ສະຫງົບ ຢູ່ໃນສະຖານການສຶກສາ ແລະ ສັງຄົມ;

6. ນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນລົງໄປ ບໍ່ໃຫ້ຂັບຂີ່ລົດຈັກ ຫຼື ລົດໃຫຍ່ ມາໂຮງຮຽນດ້ວຍຕົນເອງ ຕ້ອງແມ່ນຄວາມຮັບຜິດຊອບຂອງຜູ້ປົກຄອງ, ສໍາລັບນັກຮຽນຊັ້ນມັດທະຍົມສຶກສາຕອນປາຍ ອະນຸຍາດໃຫ້ຂັບຂີ່ລົດຈັກມາໂຮງຮຽນ, ແຕ່ໂຮງ ຮຽນຕ້ອງໄດ້ຈັດສັນບ່ອນຈອດລົດ ຢ່າງເປັນລະບຽບຮຽບຮ້ອຍ, ຄວາມປອດໄພ ແລະ ບໍ່ໃຫ້ຂັບຂີ່ລົດຈັກແຂ່ງກັນຕາມເສັ້ນທາງຢ່າງເດັດຂາດ;

7. ຫຼິ້ນໂທລະສັບໃນຊົ່ວໂມງຮຽນ;

8. ປະລະການຮຽນ ຫຼື ອອກໂຮງຮຽນ ຈົນກວ່າຈະຈົບມັດທະຍົມຕອນຕົ້ນ ຫຼື ຕອນປາຍ;

9. ພົວພັນຊູ້ສາວ ທີ່ຂັດກັບລະບຽບ ຂອງສະຖານການສຶກສາ ແລະ ຮີດຄອງປະເພນີ;

10. ມີພຶດຕິກຳອື່ນ ເປັນຕົ້ນ ສັກລາຍ, ຜູ້ຊາຍບ່ອງຫູ ແມ່ຍິງບ່ອງຫູຫຼາຍຮູ ທີ່ເປັນການລະເມີດຕໍ່ກົດລະບຽບຂອງໂຮງຮຽນ ແລະ ກົດໝາຍ;

## ໝວດທີ IV
## ອົງການ ຄຸ້ມຄອງ ແລະ ກວດກາ

### ມາດຕາ 11 ອົງການຄຸ້ມຄອງ ວຽກງານການສຶກສາ

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງວຽກງານການສຶກສາ ແລະ ກິລາ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງ ໂດຍມອບໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາພະແນກການ, ອົງການປົກຄອງເມືອງ, ຄະນະພັດທະນາການສຶກສາ ແລະ ອົງການທີ່ກ່ຽວຂ້ອງ.

**ອົງການຄຸ້ມຄອງວຽກງານສຶກສາ ແລະ ກິລາ ພາຍໃນແຂວງ ປະກອບດ້ວຍ:**

1. ພະແນກສຶກສາທິການ ແລະ ກິລາ ແຂວງ;
2. ຫ້ອງການສຶກສາທິການ ແລະ ກິລາ ເມືອງ;
3. ສະຖານການສຶກສາທັງພາກລັດ ແລະ ເອກະຊົນ;
4. ຄະນະພັດທະນາການສຶກສາຂັ້ນບ້ານ.

### ມາດຕາ 12 ອົງການກວດກາ ການຄຸ້ມຄອງ ຄູສອນ ແລະ ນັກຮຽນ

ອົງການກວດກາວຽກງານຄຸ້ມຄອງ ຄູສອນ ແລະ ນັກຮຽນ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ;

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານສຶກສາ ແລະ ກິລາ ທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້;

ອົງການກວດກາພາຍນອກ ປະກອບດ້ວຍ ສະພາປະຊາຊົນຂັ້ນແຂວງ, ອົງການກວດກາພັກ-ລັດແຂວງ, ສະຫະພັນນັກຮົບເກົ່າ, ແນວລາວສ້າງຊາດແຂວງ ແລະ ອົງການຈັດຕັ້ງມະຫາຊົນ.

### ມາດຕາ 13 ເນື້ອໃນການກວດກາ

1. ການປະຕິບັດນະໂຍບາຍ, ລະບຽບ ກົດໝາຍ ກ່ຽວກັບວຽກງານສຶກສາ ພາຍໃນແຂວງ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໃນຄວາມຮັບຜິດຊອບ, ,ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງຜູ້ອຳນວຍການ ແລະ ຄູ;

3. ການນຳໃຊ້ງົບປະມານ ແລະ ການເງິນ ຂອງຂະແໜງການສຶກສາທິການ ແລະ ກິລາ;

4. ຄຸນນະພາບການຈັດການຮຽນ-ການສອນ, ການປະຕິບັດລະບຽບວິໄນຂອງນັກຮຽນ ແລະ ອື່ນໆ.

### ມາດຕາ 14 ຮູບການ ກວດກາ

1. ກວດກາປົກກະຕິ ເຊິ່ງແມ່ນ ການກວດກາທີ່ດຳເນີນຕາມແຜນ ແລະ ມີກຳນົດເວລາອັນແນ່ນອນ;

2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ເຊິ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ເຊິ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ ຢ່າງໜ້ອຍ 24 ຊົ່ວໂມງ;

3. ກວດກາແບບກະທັນຫັນ ເຊິ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ທຸກພາກສ່ວນຂອງສັງຄົມ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນໃນວຽກງານ ຄຸ້ມຄອງຄູສອນ ແລະ ນັກຮຽນ ພາຍໃນແຂວງ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ, ສົມລະເສີນ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 16 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ປະຕິບັດວິໄນ ຕາມລະບຽບການ ຫຼື ຖືກດຳເນີນຄະດີ ຕາມກົດໝາຍ.

- ອີງໃສ່ດຳລັດ ວ່າດ້ວຍລັດຖະກອນຄູ ເລກທີ 202/ລບ;ລົງວັນທີ 12 ພຶດສະພາ 2023;
- ອີງໃສ່ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາວ່າດ້ວຍການຄຸ້ມຄອງ ຄູ ແລະ ນັກຮຽນຊັ້ນມັດທະຍົມສຶກສາ ເລກທີ 2059/ສສກ.ມຍ;ລົງວັນທີ 11ມິຖຸນາ 2013.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ພະແນກສຶກສາທິການ ແລະ ກິລາ ແຂວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ສະຖານການສຶກສາ ທັງພາກລັດ - ເອກະຊົນ,ຄະນະພັດທະນາການສຶກສາຂັ້ນບ້ານ, ຂອບຄົວ ແລະທຸກພາກສ່ວນໃນສັງຄົມ ຕ້ອງ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງຈັດພິມລົງເຜີຍແຜ່ທາງລັດຖະການ ສິບຫ້າ ວັນ.

**ເຈົ້າແຂວງ**

ວັນໄຊ ພອງສະຫວັນ